ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໂໂໂ❀໐໐໐

ນາຍົກລັດຖະມົນຕີ

ເລກທີ 55 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 30-12-2016

# ຄຳສັ່ງ

## ວ່າດ້ວຍມາດຕະການ ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ລາຍຈ່າຍ ເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ປີ 2017

ເຖິງ: - ບັນດາທ່ານ ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການຈັດຕັ້ງທຽບເທົ່າກະຊວງ,
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015;
- ອີງຕາມມະຕິ ຂອງສະພາແຫ່ງຊາດ ສະບັບເລກທີ 015/ສພຊ, ລົງວັນທີ 24 ພະຈິກ 2016 ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳສົກປີ 2015-2016 ແລະ ທິດທາງແຜນການປີ 2017.

ເພື່ອຮັບປະກັນ ການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ມີປະສິດທິຜົນ, ທັນຕາມກຳນົດເວລາ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການກຳນົດ ແນໃສ່ເຮັດໃຫ້ພະນັກງານລັດຖະກອນ, ທະຫານ, ຕຳຫລວດ ແລະ ພະນັກງານບຳນານ ໃນຂອບເຂດທົ່ວປະເທດ ໄດ້ຮັບເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍຂອງຕົນ ຕາມນະໂຍບາຍຂອງລັດຖະບານວາງອອກ ທັນຕາມກຳນົດເວລາ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ :

1. ມອບໃຫ້ບັນດາລັດຖະມົນຕີກະຊວງ ແລະ ຫົວໜ້າອົງການຈັດຕັ້ງທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານເຈົ້າແຂວງ ໃນຂອບເຂດທົ່ວປະເທດ ເອົາໃຈໃສ່ປະຕິບັດການເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍ ເປັນບຸລິມະສິດອັນດັບໜຶ່ງ ແລະ ຮັບປະກັນໃຫ້ສາມາດຈ່າຍເປັນປົກກະຕິແຕ່ລະເດືອນ ໂດຍປະຕິບັດ ດັ່ງນີ້ :

1.1 ປະຕິບັດນະໂຍບາຍ ເພີ່ມດັດສະນີເງິນເດືອນ ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານບຳນານ 500 ກີບຕໍ່ດັດສະນີ (ຈາກ 6.700 ກີບ/ໜຶ່ງດັດສະນີ ມາເປັນ 7.200 ກີບ/ໜຶ່ງດັດສະນີ) ໂດຍເລີ່ມປະຕິບັດນັບແຕ່ວັນທີ 01 ມັງກອນ 2017 ເປັນຕົ້ນໄປ;

1.2 ບັນດາກະຊວງ, ອົງການຈັດຕັ້ງທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນຂອບເຂດທົ່ວປະເທດ ພາຍຫຼັງໄດ້ຮັບການແຈ້ງແຜນລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍປະຈຳປີ ຕາມແຜນງົບປະມານທີ່ ສະພາແຫ່ງຊາດຮັບຮອງແລ້ວ ແມ່ນໃຫ້ສ້າງເປັນແຜນເດືອນ, ແຜນງວດ ແລະ ແຜນປີ ລະອຽດ, ພ້ອມທັງສ້າງແຜນການດຸ່ນດ່ຽງ ຮັບປະກັນໃຫ້ມີເງິນພຽງພໍໃນແຕ່ລະເດືອນ, ງວດ ແລະ ປີ ໃນການເບີກຈ່າຍຕົວຈິງ.

ປະກອບເອກະສານເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ນັບແຕ່ຂັ້ນເມືອງ, ຂັ້ນແຂວງ, ນະຄອນຫຼວງວຽງຈັນ ແລະ ຂັ້ນສູນກາງ ໃຫ້ທັນກຳນົດເວລາ ເພື່ອສາມາດອະນຸມັດ ແລະ ປະຕິບັດການເບີກຈ່າຍໄດ້ຕາມແຜນການ. ສຳລັບພາກສ່ວນທີ່ມີລາຍຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຕິດພັນກັບລາຍຮັບວິຊາການ ແມ່ນໃຫ້ປະກອບເອກະສານ ການສົ່ງມອບລາຍຮັບ ທີ່ສາມາດຈັດເກັບໄດ້ ແລະ ປະກອບເອກະສານຂໍເບີກຈ່າຍ ໃຫ້ທັນການເປັນແຕ່ລະເດືອນ ແລະ ງວດ.

1.3 ໃຫ້ເປີດບັນຊີຮອງຮັບເງິນສະເພາະ ເພື່ອປະຕິບັດການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຊຶ່ງແຫຼ່ງເງິນແມ່ນມາຈາກລາຍຮັບຂອງແຂວງ, ນະຄອນຫຼວງວຽງຈັນ, ລາຍຮັບວິຊາການ ແລະ ເງິນດຸ່ນດ່ຽງຈາກສູນກາງ, ແຕ່ໃນນີ້ແມ່ນໃຫ້ນຳໃຊ້ລາຍຮັບພາຍໃນຂອງບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ຂອງເມືອງກ່ອນເປັນຕົ້ນຕໍ ໂດຍບໍ່ໃຫ້ລໍຖ້າການເຄື່ອນຍ້າຍເງິນດຸນດ່ຽງຈາກກະຊວງການເງິນ ຄື:

- ສຳລັບທ້ອງຖິ່ນທີ່ເກີນດຸນ ແມ່ນໃຫ້ໂອນເງິນຈາກບັນຊີລາຍຮັບງົບປະມານພາຍໃນຂອງຕົນ ເຂົ້າບັນຊີຮອງຮັບການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ພຽງພໍ ແລະ ປະຕິບັດການເບີກຈ່າຍ ໃຫ້ສຳເລັດເປັນປົກກະຕິທຸກເດືອນ; ຫລັງຈາກນັ້ນ ຈຶ່ງເບີກຈ່າຍລາຍຈ່າຍພາກອື່ນໆ.
- ສຳລັບທ້ອງຖິ່ນທີ່ຂາດດຸນ ແມ່ນໃຫ້ໂອນເງິນຈາກບັນຊີລາຍຮັບງົບປະມານພາຍໃນຂອງຕົນ ເຂົ້າບັນຊີຮອງຮັບການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ຮັບປະກັນສາມາດເບີກຈ່າຍໄດ້ໂດຍພື້ນຖານກ່ອນ ສ່ວນທີ່ບໍ່ພຽງພໍຈຶ່ງນຳໃຊ້ແຫຼ່ງດຸ່ນດ່ຽງຈາກສູນກາງ ເພື່ອສືບຕໍ່ຈ່າຍໃຫ້ຄົບຖ້ວນ ແລະ ທັນເວລາ.

1.4 ຕ້ອງໄດ້ມີການສະຫລຸບລາຍງານ ເປັນແຕ່ລະຂັ້ນ ນັບແຕ່ຂັ້ນເມືອງ ເຖິງຂັ້ນແຂວງ ແລະ ຂັ້ນແຂວງ ເຖິງສູນກາງເປັນແຕ່ລະເດືອນ ກ່ຽວກັບການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ປະຈຳເດືອນ ເພື່ອສາມາດສັງລວມ ແລະ ຕິດຕາມການຈັດຕັ້ງປະຕິບັດຕົວຈິງຢ່າງທັນການ ແລະ ສອດຄ່ອງກັບເປົ້າໝາຍການຈ່າຍ.

1.5 ມອບໃຫ້ຂະແໜງການເງິນ (ຄັງເງິນແຫ່ງຊາດ) ໃນຂອບເຂດທົ່ວປະເທດ ປະສານສົມທົບກັບທະນາຄານ ແລະ ສາຂາທະນາຄານທຸລະກິດ ຂອງພາກລັດ ແລະ ເອກະຊົນ ເພື່ອປຶກສາຫາລື ແລະ ສ້າງກົນໄກການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍຜ່ານລະບົບທະນາຄານ (ATM) ຢູ່ຂັ້ນເມືອງ ໃຫ້ທົ່ວເຖິງ ແລະ ມີປະສິດທິຜົນ ຄື :

- ເມືອງ ທີ່ມີສາຂາທະນາຄານ ຕັ້ງຢູ່ ແມ່ນໃຫ້ສ້າງບັນຊີການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຂອງພະນັກງານ, ລັດຖະກອນ ແຕ່ລະຄົນ ຢູ່ທະນາຄານ ແລະ ປະຕິບັດການເບີກຈ່າຍຜ່ານລະບົບທະນາຄານ ໂດຍກົງເລີຍ.
- ສ່ວນເມືອງໃດ ທີ່ບໍ່ທັນມີສາຂາ ຫຼື ໜ່ວຍບໍລິການທະນາຄານຕັ້ງຢູ່ ໃຫ້ຂະແໜງການເງິນ ສົມທົບກັບທະນາຄານຄົ້ນຄວ້າກົນໄກການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ເປັນອັນສະເພາະ ເພື່ອຮັບປະກັນການເບີກຈ່າຍໄດ້ເປັນປົກກະຕິທຸກເດືອນ.

**2.** ມອບໃຫ້ບັນດາກະຊວງ, ອົງການຈັດຕັ້ງທຽບເທົ່າກະຊວງ ແລະ ບັນດາແຂວງ, ນະຄອນຫຼວງວຽງຈັນ (ພະແນກການເງິນປະຈຳແຂວງ, ນະຄອນຫຼວງວຽງຈັນ) ສົມທົບກັບກະຊວງພາຍໃນ, ພະແນກພາຍໃນຂອງແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການພາຍໃນເມືອງ ເພື່ອຄົ້ນຄ້ວາ ດັ່ງນີ້ :

- ຄົ້ນຄ້ວາມາດຕະການໃນການຕິດຕາມກວດກາ ການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍຕົວຈິງ ເປັນແຕ່ລະເດືອນ, ງວດ ແລະ ປີ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີຄວາມເຂັ້ມງວດ ແລະ ມີປະສິດທິຜົນ.
- ກວດກາຄືນຈຳນວນພົນທີ່ມີໜ້າຕົວຈິງ, ລວມທັງການເລື່ອນຊັ້ນ-ຂັ້ນ ເງິນເດືອນ, ພະນັກງານເຂົ້າໃໝ່ ເພື່ອຢັ້ງຢືນ ຄວາມຖືກຕ້ອງ ຂອງບັນຊີເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ຕາມຈຳນວນພົນທີ່ມີໜ້າຕົວຈິງເປັນແຕ່ລະງວດ ແລະ ນຳສົ່ງໃຫ້ກະຊວງການເງິນ ແລະ ຂະແໜງການເງິນ ສັງລວມ ແລະ ຄາດຄະເນການຈັດຕັ້ງປະຕິບັດລາຍຈ່າຍເງິນເດືອນ ໃຫ້ຖືກຕ້ອງ ແລະ ທັນການ;

3. ມອບໃຫ້ກະຊວງການເງິນ ປະສານສົມທົບຄືນກັບກະຊວງພາຍໃນ, ບັນດາກະຊວງ, ອົງການຈັດຕັ້ງທຽບເທົ່າກະຊວງ ແລະ ທ້ອງຖິ່ນ ເພື່ອປະເມີນຄືນບັນດານິຕິກຳ ທີ່ຕິດພັນກັບເງິນເດືອນ ແລະ ເງິນນະໂຍບາຍ ເພື່ອຄົ້ນຄ້ວາ ແລະ ປັບປຸງໃຫ້ມີຄວາມແທດເໝາະ ແລະ ສອດຄ່ອງກັບສະພາບຄວາມເປັນຈິງໃນປະຈຸບັນ, ເປັນຕົ້ນ : ນິຕິກຳສະເພາະຂອງຂະແໜງການ ກ່ຽວກັບການປະຕິບັດເງິນເດືອນ, ເງິນອຸດໜູນ, ເງິນນະໂຍບາຍ ແລະ ອື່ນໆ;

4. ສະເພາະກົນໄກການຈັດຕັ້ງປະຕິບັດລະອຽດທາງດ້ານວິຊາການ ຕໍ່ກັບເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ, ລວມທັງ ພະນັກງານກ່ອນເຂົ້າບຳນານ, ເງິນບຳນານ, ເງິນປະກັນສັງຄົມ, ພະນັກງານເຂົ້າໃໝ່, ພະນັກງານ 95% ແລະ ອື່ນໆ ແມ່ນມອບໃຫ້ຂະແໜງການກ່ຽວຂ້ອງ ສ້າງເປັນບົດແນະນຳທາງດ້ານວິຊາການສະເພາະຕ່າງຫາກ.

5. ມອບໃຫ້ບັນດາລັດຖະມົນຕີ, ຫົວໜ້າອົງການຈັດຕັ້ງທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາເຈົ້າແຂວງ ໃນຂອບເຂດທົ່ວປະເທດ ປຶກສາຫາລື ແລະ ຄົ້ນຄ້ວາຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຕາມໜ້າທີ່ຂອງຕົນ ໃຫ້ໄດ້ຮັບຜົນດີ ແລະ ສຳເລັດຕາມລະດັບຄາດໝາຍ.

6. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ